ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ...13.../ຈຂ,ອປ

ອັດຕະປື, ວັນທີ 02 ຕຸລາ 2017

# ຄໍາສັ່ງ

## ວ່າດ້ວຍການ ກວາດລ້າງຂະບວນການ

## ລັກລອບຂຸດຄົ້ນຄໍາ ຜິດກົດໝາຍ ໃນຂອບເຂດແຂວງອັດຕະປື

ເຖິງ: ພະແນກການ, ອົງການ ອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ 5 ຕົວເມືອງ.

- ອີງຕາມ ກົດໝາຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- ອີງຕາມ ມະຕິກອງປະຊຸມຂອງຄະນະປະຈໍາພັກແຂວງ ຮ່ວມກັບ ຄະນະ ປກຊ-ປກສຂັ້ນແຂວງ ຄັ້ງວັນທີ 5 ກັນຍາ 2017.

ໃນໄລຍະຜ່ານມາທາງແຂວງໄດ້ອອກຄໍາສັ່ງຢຸດຕິການດໍາເນີນການຂຸດຄົ້ນຄໍາທັງໝົດ,ນໍາໃຊ້ກໍາລັງໄປກວາດລ້າງສໍາເລັດຜົນເປັນຢ່າງດີ. ປະຈຸບັນເກີດມີໜໍ່ແໜງການລັກລອບຂຸດຄົ້ນຄໍາ ຂອງປະຊາຊົນ, ບຸກຄົນ ທີ່ມີພາຫານະກົນຈັກ ຢູ່ຕາມລໍາຫ້ວຍຕ່າງໆ ທີ່ສວຍໂອກາດ ແອບອ້າງບໍລິສັດ, ເຊິ່ງທາງແຂວງບໍ່ສາມາດຮັບຮູ້ເປັນອັນແນ່ນອນ, ຂະບວນການດັ່ງກ່າວໄດ້ສ້າງຄວາມບໍ່ສະຫງົບ, ປັ່ນປ່ວນພາຍໃນແຂວງ, ສະນັ້ນ ເພື່ອສະກັດກັ້ນການລັກລອບບໍ່ໃຫ້ຖຸມເຄືອ ແລະ ແຜ່ລາມຕໍ່ໄປ.

## ເຈົ້າແຂວງອອກຄໍາສັ່ງດັ່ງນີ້:

1. ມອບໃຫ້ກອງບັນຊາການທະຫານແຂວງ ສົມທົບກັບ ປກສ ແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ ແລະ ເມືອງ ຊານໄຊ, ເມືອງ ພູວົງ ດໍາເນີນການກວາດລ້າງ, ແກ້ໄຂ ແລະ ຢຸດຕິຂາດຕົວ ຂອງ ບັນດາບຸກຄົນ, ກຸ່ມຄົນ, ບໍລິສັດ ແລະ ຜູ້ປະກອບການອື່ນໆ ທີ່ເຄື່ອນໄຫວ ສໍາຫຼວດ, ຊອກຄົ້ນ ແລະ ຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດວັງຕັດ , ເມືອງຊານໄຊ ແລະ ເຂດນໍ້າຊວນ, ເມືອງ ພູວົງ(ນັບທັງຜູ້ເຮັດສັນຍາ, ແອບອ້າງ ແລະ ດໍາເນີນໂດຍກົງ)ທີ່ບໍ່ໄດ້ຮັບອະນຸຍາດຈາກລັດຖະບານ,ໃຫ້ສໍາເລັດໃນເດືອນ 11/2017.
2. ມອບໃຫ້ ພະແນກພະລັງງານ ແລະ ບໍ່ແຮ່ ສົມທົບກັບກອງເລຂາ ຄລທ ຂັ້ນແຂວງ (ພະແນກແຜນການ ແລະ ການລົງທຶນ) ກວດກາຄືນ ຕາມບົດບັນທຶກ, ສັນຍາ, ຂໍ້ຕົກລົງ ຫຼື ນິຕິກໍາຕ່າງໆ ທີ່ລັດຖະບານ ຫຼື ກະຊວງ,ຂະແໜງການຂັ້ນສູນກາງ ແລະ ແຂວງອອກອະນຸຍາດໃຫ້; ຖ້າເຫັນວ່າອັນໃດບໍ່ສອດຄ່ອງກັບລະບຽບກົດໝາຍ ແມ່ນໃຫ້ສະເໜີຄືນ ເພື່ອຂໍລົບລ້າງເອກະສານດັ່ງກ່າວ; ໃນນີ້ ໃຫ້ສົມທົບກັບບັນດາບໍລິສັດທີ່ໄດ້ຮັບອະນຸຍາດ ເຮັດບັນຊີລະອຽດບັນດາບໍລິສັດລູກ, ບໍລິສັດຂາຮຸ້ນ, ບໍລິສັດສັນຍາຕໍ່(sub-contract), ບໍລິສັດຄູ່ຮ່ວມມືພາຍນອກ ຫຼື ຄູ່ສັນຍາອື່ນໆ ເຊັ່ນ: ຜູ້ສະໜອງນໍ້າມັນ, ອາຫານ, ອຸປະກອນອາໄລ່, ການຕະຫຼາດ ແລະ ອື່ນໆ ມີຈໍານວນເທົ່າໃດ?,

ເບື້ອງລັດໃຜເປັນຜູ້ອະນຸມັດ; ຈໍານວນພົນເທົ່າໃດ?, (ພາຍໃນເທົ່າໃດ? ແລະ ຕ່າງປະເທດເທົ່າໃດ?) ແລະ ໃຫ້ເຄື່ອນໄຫວດ້ານໃດແດ່, ອອກບັດແຮງງານແທ້ເທົ່າໃດ?.

- ກວດເບິ່ງບົດວິພາກເສດຖະກິດ-ເຕັກນິກ ແລະ ການນໍາໃຊ້ຕົວຈິງ; ຖ້າເຫັນວ່າບໍ່ຖືກຕ້ອງຕາມສັນຍາ ແລະ ມາດຖານທີ່ໄດ້ຮັບຮອງ ແມ່ນໃຫ້ຢຸດຕິທັນທີ, ໂດຍສະເພາະເຄື່ອງຮ່ອນຄໍາຂະໜາດນ້ອຍຂອງຄອບຄົວ, ເຄື່ອງຈັກສະຕິນຕັດໄມ້, ໂຮງຊອຍ, ໃບເລື່ອຍ ແລະ ເຄື່ອງມື ອຸປະກອນອື່ນໆທີ່ບໍ່ຖືກຕ້ອງ ແມ່ນຢຸດຕິ ແລະ ຢຶດທັນທີ ແລ້ວລາຍງານໃຫ້ເຈົ້າແຂວງດ່ວນ ເພື່ອຂໍອະນຸມັດດໍາເນີນຄະດີຕໍ່ຜູ້ກະທໍາຜິດ.

- ສໍາລັບງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກດັ່ງກ່າວ ແມ່ນໃຫ້ນໍາໃຊ້ບ້ວງເງິນຄຸ້ມຄອງໂຄງການທີ່ທາງບໍລິສັດຈັດສັນໃຫ້ຕາມສັນຍາ, ແຂວງຈະປະກອບສ່ວນຕື່ມໃຫ້ຈໍານວນໜຶ່ງ.

3. ມອບໃຫ້ຫ້ອງການ ປກຊ-ປກສແຂວງ ປະສານງານ ແລະ ຕິດຕາມ ບັນດາເປົ້າໝາຍຕ່າງໆ(ຜູ້ທີ່ກ່ຽວຂ້ອງ) ເພື່ອສະຫຼຸບລາຍງານໃຫ້ ຄະນະປະຈໍາພັກແຂວງ, ເຈົ້າແຂວງ-ຮອງເຈົ້າແຂວງຮັບຊາບເປັນແຕ່ລະໄລຍະ ເພື່ອມີທິດຊີ້ນໍາໃນການແກ້ໄຂ, ມອບໃຫ້ຄະນະກວດກາພັກ-ພະແນກກວດກາລັດ ຕິດຕາມກວດກາການປະຕິບັດໜ້າທີ່ ຂອງຄະນະດັ່ງກ່າວ ແລະ ສະເໜີທິດແກ້ໄຂຖ້າເຫັນວ່າມີຄວາມຈໍາເປັນ.

4. ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຄໍາສັ່ງ, ຂໍ້ຕົກລົງ, ແຈ້ງການຕ່າງໆທີ່ໄດ້ອອກໃນໄລຍະຜ່ານມາ ທີ່ມີເນື້ອໃນຂັດກັບຄໍາສັ່ງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ບ່ອນສົ່ງ:

| | |
|---|---|
| - ຄະນະປະຈໍາພັກແຂວງ ທ່ານ ລະ | 1 ສະບັບ. |
| - ຫ້ອງວ່າການແຂວງ | 1 ສະບັບ. |
| - ພະແນກພະລັງງານ ແລະ ບໍ່ແຮ່ | 1 ສະບັບ. |
| - ກອງບັນຊາການທະຫານ ແຂວງ | 1 ສະບັບ. |
| - ກອງບັນຊາການ ປກສ ແຂວງ | 1 ສະບັບ. |
| - ຫ້ງການ ປກສ-ປກຊ ແຂວງ | 1 ສະບັບ. |
| - ຫ້ອງວ່າການປົກຄອງເມືອງ ເມືອງລະ | 1 ສະບັບ. |
| - ເກັບມ້ຽນ | 1 ສະບັບ. |

ເຈົ້າແຂວງ

ປອ ນາມ ວິຍະເກດ